ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 6329 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 11 ມິຖຸນາ 2024

# ຂໍ້ຕົກລົງ

## ວ່າດ້ວຍ ການອະນຸມັດໃຫ້ເຊັນສັນຍາກັບ ທີ່ປຶກສາຄວບຄຸມການປັບປຸງຫ້ອງແລັບ ຂອງໂຄງການ ພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ເພື່ອການ ເຊື່ອມຈອດ-ເຊື່ອມໂຍງ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມແຜນການ ແລະ ການເງິນ ສະບັບເລກທີ 05674/ກຜງ, ລົງວັນທີ 05 ມີນາ 2024.

## ລັດຖະມົນຕີ ຕົກລົງ:

ມາດຕາ 1 ເຫັນດີຮັບຮອງເອົາ ທ່ານ ສຸລິເດດ ສົມບັນດິດ (Mr. Soulideth SOMBANDITH) ໃນຕຳແໜ່ງທີ່ປຶກສາຄວບຄຸມການປັບປຸງຫ້ອງແລັບ ເພື່ອຊ່ວຍວຽກໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ເພື່ອການເຊື່ອມຈອດ-ເຊື່ອມໂຍງ ປະຈຳຢູ່ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ໃນໄລຍະເວລາ 4 ເດືອນ (Part Time) ໃນມູນຄ່າສັນຍາລວມທັງໝົດ USD 8.700,00 (ແປດພັນເຈັດຮ້ອຍໂດລາ ສະຫະລັດ).

ມາດຕາ 2 ມອບໃຫ້ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ເຊັນສັນຍາກັບທີ່ປຶກສາ ດັ່ງກ່າວໃຫ້ຖືກຕ້ອງຕາມລະບຽບການ.

ມາດຕາ 3 ສຳລັບງົບປະມານໃນການຈັດຈ້າງທີ່ປຶກສາ ດັ່ງກ່າວແມ່ນໃຫ້ນຳໃຊ້ງົບປະມານກູ້ຢືມຈາກທະນາຄານໂລກພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ເພື່ອການເຊື່ອມຈອດ-ເຊື່ອມໂຍງ ພາຍໃຕ້ລະຫັດຈັດຊື້-ຈັດຈ້າງ ເລກທີ: ICS-051.

ມາດຕາ 4 ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສຳເລັດຜົນດ້ວຍດີ.

ມາດຕາ 5 ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບ່ອນນຳສົ່ງ:

- ຫ້ອງການກະຊວງ ຍທຂ 1 ສະບັບ;
- ກົມກ່ຽວຂ້ອງ ບ່ອນລະ 1 ສະບັບ;
- ສຳເນົາ 1 ສະບັບ.

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ງາມປະສົງ ເມືອງມະນີ